# FORCOM NEWS LETTER

ສະບັບທີ 6 (No. 6) ປະຈຳວັນທີ 1-15 ເດືອນ 7 ປີ 2005

**ໂຄງການຄຸ້ມຄອງປ່າໄມ້ ແລະ ສົ່ງເສີມຊາວບ້ານ (ຟໍຄອມ)**

Forest Management and Community Support Project (FORCOM)

## ສາລະບານ


- ຄຳຄິດເຫັນກ່ຽວກັບຈົດໝາຍຂ່າວ
- ຂ່າວສົດໆຮ້ອນໆຈາກໂຄງການ
- ການຝຶກອົບຮົມພະນັກງານ
- ຄວາມຫຍຸ້ງຍາກໃນການນຳສົ່ງ
- ໂສມໜ້າຜູ້ເຂົ້າຮ່ວມກິດຈະກຳ ~ບ້ານປົ່ງດິງ~
- ເລື່ອງເລົ່າກ່ຽວກັບ NTFP
- ເລື່ອງເລົ່າກ່ຽວກັບລາວ
- ເຫດການແລະກິດຈະກຳຕົ້ນຕໍ




ຄະນະນຳຂອງພະແນກກະສິກຳແລະປ່າໄມ້ຂອງ ແຂວງບໍ່ແກ້ວຍາມໃດກໍ່ໃຫ້ຄວາມສຳຄັນຕໍ່ວຽກງານການຮ່ວມມືສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອ ເຂົ້າມາພັດທະນາປະເທດຊາດ. ພ້ອມນັ້ນ ກໍ່ໄດ້ເອົາໃຈໃສ່ລົງຕິດຕາມຊຸກຍູ້ ແລະ ສົ່ງເສີມການຜະລິດຂອງພໍ່ແມ່ປະຊາຊົນ ໃນການຜະລິດສະບຽງອາຫານ, ຜະລິດເປັນສິ້ນຄ້າ ແລະ ຈຳກັດການຖາງປ່າເຮັດໄຮ່ ເພື່ອແນ່ໃສ່ລຶບລ້າງຄວາມທຸກຈົນ ໂດຍຜ່ານການສ້າງກຸ່ມບ້ານພັດທະນາກະສິກຳ ແລະ ປ່າໄມ້ ໃຫ້ກາຍເປັນຕົວແບບໃນການສົ່ງເສີມການຜະລິດໃຫ້ເປັນສິນຄ້າ. ໂດຍສະເພາະແລ້ວ, ທ່ານຍັງໄດ້ລົງໄກ້ສິດຕິດແທດ ແລະໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດກິດຈະກຳຂອງ 2 ບ້ານ ຈຸດທົດລອງຂອງໂຄງການ ຟໍຄອມ (FORCOM) ຄື: ບ້ານດອນແກ້ວ ແລະ ບ້ານປາງທອງ ເມືອງຜາອຸດົມ ໂດຍໄດ້ເຂົ້າຮ່ວມກອງປະຊຸມໝົດບ້ານຄັ້ງທີ່ 2 ເພື່ອຮັບຟັງຄວາມຄືບໜ້າຂອງການສ້າງແຜນກິດຈະກຳຂອງຊາວບ້ານໃນບ້ານປາງທອງຢ່າງສົນໃຈ.

ທາງອຳນາດການປົກຄອງແຂວງບໍ່ແກ້ວຄາດຫວັງວ່າ ຖ້າໂຄງການ ຟໍຄອມ ສາມາດບັນລຸຜົນສຳເລັດຕາມຈຸດປະສົງແລະຄາດໝາຍທີ່ວາງໄວ້ກໍ່ຈະປະກອບສ່ວນຢ່າງສຳຄັນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງ ແຂວງບໍ່ແກ້ວເອງ ກໍ່ຄືຂອງລັດຖະບານ, ໂດຍສະເພາະແມ່ນການຈັດຕັ້ງປະຕິບັດ 8 ແຜນງານບູລິມາສິດຂອງ ລັດຖະບານໃຫ້ປະກົດຜົນເປັນຈິງ. ນອກຈາກນັ້ນ, ຜົນສຳເລັດຂອງການຈັດຕັ້ງປະຕິບັດໂຄງການ ຟໍຄອມ ກໍ່ຍັງຈະເປັນຕົວແບບອັນໜຶ່ງ ສຳລັບການຜະລິດກະສິກຳແລະປ່າໄມ້ແບບຍືນຍົງ, ການຜະລິດເປັນສິນຄ້າ, ສ້າງວຽກເຮັດງານທຳ ກໍ່ຄື ອາຊີບຄົງທີເພີ່ມລາຍໄດ້ອັນເປັນພື້ນຖານ ໃຫ້ປະຊາຊົນ ໃນເຂດຊົນນະບົດ ແລະ ເຮັດໃຫ້ເຂົາເຈົ້າຄ່ອຍໆມີຄວາມສາມາດກ້າວພົ້ນອອກ ຈາກຄວາມທຸກຈົນໄດ້.. ພວກເຮົາຄາດຫວັງວ່າ ໃນອານາຄົດໂຄງການ ຟໍຄອມ ຍັງຈະກາຍເປັນຕົວແບບຂອງໂຄງການຮ່ວມມືອັນໜຶ່ງ ຂອງການພັດທະນາວຽກງານກະສິກຳແລະປ່າໄມ້ທີ່ຍືນຍົງ ແລະ ຈະຂະຫຍາຍອອກໄປສູ່ທ້ອງຖິ່ນອື່ນ ໃນຂອບເຂດທົ່ວປະເທດ.

(ບົດໂດຍ : ທ່ານ ບຸນມີ ສຸວັນນະລັງສີ, ຫົວໜ້າພະແນກກະສິກຳແລະປ່າໄມ້ ແຂວງບໍ່ແກ້ວ)

## ຂ່າວສົດໆຮ້ອນໆຈາກ FORCOM

ເມື່ອວັນທີ 20/7 ທີ່ຜ່ານມາ, ທ່ານ ດຣ ຕີ ພົມມະສັກ, ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳແລະປ່າໄມ້, ທັງເປັນປະທານຄະນະກຳມະການຊີ້ນຳ ໂຄງການ ຟໍຄອມ ພ້ອມດ້ວຍຄະນະ ຊຶ່ງລວມມີບັນດາ ຫົວໜ້າກົມ, ຮອງກົມ, ກອງແລະສະຖາບັນອ້ອມຂ້າງກະຊວງກະສິກຳ ໄດ້ລົງຢ້ຽມຢາມແລະພົບປະໂອ້ລົມກັບພໍ່ແມ່ປະຊາຊົນບ້ານຫາດຮວຍ ເມືອງປາກແຊງ ແຂວງຫຼວງພະບາງ ພ້ອມທັງໄດ້ຮ່ວມກັນລົງສັງເກດກິດຈະກຳຕົວຈິງ ຂອງຊາວບ້ານທີ່ໂຄງການໃຫ້ການຊ່ວຍເຫຼືອ. ກ່ອນໜ້ານີ້, ລະຫວ່າງເດືອນ ພຶດສະພາ,

### ດຣ. ຕີ ພົມມະສັກ,ລັດຖະມົນຕີຊ່ວຍວ່າການກະຊວງກະສິກຳແລະປ່າໄມ້,ລົງຢ້ຽມຢາມພື້ນທີ່ປະຕິບັດງານຂອງໂຄງການ

ທ່ານ ດຣ ສຸ່ນ ສະພັງທອງ, ລັດຖະມົນຕີວ່າການກະຊວງກະສິກຳແລະປ່າໄມ້ ພ້ອມດ້ວຍພະນັກງານຂັ້ນສູງຂອງກະຊວງ ກໍໄດ້ລົງຢ້ຽມຢາມໂຄງການ, ພ້ອມທັງໂອ້ລົມໃຫ້ທິດຊີ້ນຳແລະລະດົມຈິດໃຈ ແກ່ພະ ນັກງານໂຄງການ ຟໍຄອມ ມາກ່ອນແລ້ວ.

ສຳລັບ ທ່ານ ດຣ ຕີ ພົມມະສັກ, ຊຶ່ງເປັນທັງນັກຄົ້ນຄວ້າແລະ ຜູ້ຊີ້ນຳໂຄງການໂດຍກົງ ກໍໄດ້ລົງຊີ້ນຳ ແລະ ໃຫ້ຄຳຄິດຄຳເຫັນອັນເປັນປະໂຫຍດແກ່ຊາວບ້ານ, ໂດຍສະເພາະໃນການປູກໄມ້ອຸດສາຫະກຳ, ທ່ານໄດ້ຊີ້ໃຫ້ເຫັນວ່າ ຖ້າຄອບຄົວໜຶ່ງສາມາດ ປູກໄມ້ສັກ 1 ເຮັກຕາ / ປີ ກໍ່ຈະເຮັດໃຫ້ເນື້ອທີ່ ປ່າໄມ້ພາຍໃນບ້ານເພີ່ມຂຶ້ນແລະຈະກາຍເປັນແຫຼ່ງຊັບພະຍາກອນທີ່ມີຄຸນຄ່າແລະເປັນມູນມັງໃຫ້ແກ່ລູກຫຼານ ໃນອານາຄົດ.



ທ່ານ ດຣ ຕີ ພ້ອມໃຫ້ຄຳແນະນຳແກ່ຊາວບ້ານ

### < ການຈັດກອງປະຊຸມປຶກສາຫາລື ກ່ຽວກັບການນຳໃຊ້ທີ່ດິນແລະປ່າໄມ້ຢ່າງຍືນຍົງ(ທີ່ບ້ານສາມຕົ້ນ) >

ໃນ ວັນທີ 07/07/05 ຢູ່ບ້ານສາມຕົ້ນ ເມືອງວຽງຄຳ, ແຂວງຫຼວງພະບາງ), ສະມາຊິກທີມງານຄຸ້ມຄອງຊັບພະຍາກອນແບບມີສ່ວນຮ່ວມ 6 ຄົນ ຄື: ທ. ຕຸ້ຍ, ທ. ດວງຄຳ, ທ່ານ ວັດຕະນາເບະ (ຜູ້ຊ່ຽວຊານຍີ່ປຸ່ນ), ນ. ອຳໄພ ແລະ ທ. ຟ້າສະນັ່ນ (ພ/ງ ຫ້ອງການ ກປ ເມືອງວຽງຄຳ), ທ່ານ ບຸນໂຮມ (ພ/ງ ປ່າໄມ້ແຂວງຫຼວງພະບາງ) ໄດ້ຈັດໃຫ້ ມີກອງປະຊຸມປຶກສາຫາລື ກັບຊາວບ້ານກ່ຽວກັບ ການນຳໃຊ້ທີ່ດິນແລະປ່າໄມ້ຢ່າງຍືນຍົງຂຶ້ນ. ໃນປີ 2004 ຊຶ່ງເປັນປີເລີ່ມຕົ້ນຂອງໂຄງການນັ້ນ ໄດ້ມີການສຳຫຼວດຂໍ້ມູນທາງດ້ານເສດຖະ ກິດ-ສັງຄົມ ຂອງຊາວບ້ານແລະຂໍ້ມູນດ້ານທຳມະຊາດໄປແລ້ວພ້ອມດຽວກັນ ກໍ່ໄດ້ຈັດຕັ້ງທີມງານເພື່ອສຶກສາແລະ ວິເຄາະຄວາມເປັນໄປໄດ້ຕົວຈິງໃນການນຳໃຊ້ຊັບພະຍາກອນ.

ຜ່ານການວິເຄາະຂໍ້ມູນດັ່ງກ່າວ ທີມງານສາມາດເຂົ້າໃຈໄດ້ບັນຫາຂອງການບຸກລຸກທີ່ດິນ ແລະ ການນຳໃຊ້ພະຍາກອນທຳມະຊາດຂຶ້ນຕື່ມໄດ້ອີກ. ການທີ່ບໍ່ມີຊົນລະປະທານນັ້ນ ກໍເປັນສາເຫດໜຶ່ງທີ່ເຮັດໃຫ້ປະຊາຊົນ ຕ້ອງເຮັດໄຮ່ປູກເຂົ້າ. ກົງກັນຂ້າມເນື້ອທີ່ປ່າສຳລັບເຮັດໄຮ່ ພັດນັບມື້ນັບໜ້ອຍລົງ ເມື່ອຈຳນວນປະຊາຊົນເພີ່ມຂຶ້ນ, ດິນທີ່ຖືກນຳໃຊ້ຕະຫຼອດປີໄດ້ພົດຄວາມອຸດົມສົມບູນໄປ. ຫຼາຍກວ່າ 10 ຄອບຄົວຈຳເປັນຕ້ອງໄດ້ໄປເຊົ່າເນື້ອທີເພື່ອເຮັດໄຮ່ຈາກຊາວບ້ານອື່ນ.ປະຊາຊົນຈະຮູ້ສຶກໄດ້ດີ ເມື່ອເນື້ອທີ່ທຳກິນຂອງພວກເຂົາເຈົ້ານັບມື້ນັບຫຼຸດໜ້ອຍລົງ.ເພື່ອເປັນການເພີ່ມລາຍຮັບ, ຊາວບ້ານຈຳນວນຫຼາຍໄດ້ຮັບການສະໜັບສະໜູນດ້ານທຶນຈາກໂຄງການຟໍຄອມ ພວກເຂົາເຈົ້ານຳເອົາເງິນຈຳນວນນັ້ນໄປລົງທຶນ ລ້ຽງໝູ, ລ້ຽງ ແບ້, ຫຼື ບໍ່ດັ່ງນັ້ນ ກໍນຳໄປລົງທຶນປູກຕົ້ນໄມ້ອຸດສະຫະກຳປະເພດໃຫຍ່ໄວໃສ່ເນື້ອທີ່ດິນໄຮ່ຂອງຕົນ.ນອກຈາກຝ່າຍໂຄງການແລ້ວ ກໍຍັງມີຊາວບ້ານປະມານ 80 ກວ່າຄົນ ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຊຶ່ງພວກເຂົາເຈົ້າໄດ້ຮັບຮູ້ ບໍ່ສະເພາະແຕ່ຂໍ້ມູນທີທາງທີມງານໄດ້ວິເຄາະໃຫ້ເຫັນ, ພະນັກງານຂອງລັດ ກໍໄດ້ອະທິບາຍເຖິງນະໂຍບາຍກ່ຽວກັບ ການນຳໃຊ້ ແລະ ຄຸ້ມຄອງທີ່ດິນປ່າໄມ້ດັ່ງກ່າວ.

ໃນຕອນທ້າຍ, ກອງປະຊຸມໄດ້ເປີດໂອກາດ ໃຫ້ແຕ່ລະຄົນໄດ້ມີຄຳຄິດເຫັນແລະຖົກຖຽງບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງ ທ່ານ ສີຈັນ ໃນນາມນາຍບ້ານສາມຕົ້ນ ກໍໄດ້ຂຶ້ນສະເໜີບັນຫາແລະວິທີແກ້ໄຂຕ່າງໆອີກດ້ວຍ. ເພື່ອຍົກສູງປະສິດຕິພາບຂອງການຜະລິດ ກອງປະຊຸມໄດ້ສະເໜີໃນການປັບປຸງການລ້ຽງສັດ ແລະ ກ້າວໄປສູ່ກິດຈະກຳແບບຮ່ວມກຸ່ມຄອບຄົວ ພ້ອມດຽວກັນນັ້ນກໍຈະມີການນຳໃຊ້ລະບົບກະສິກຳ-ປ່າໄມ້ແບບປະສົມປະສານເຂົ້າໃນ ການພັດທະນາເຂດໂນນສູງ ເພື່ອການນຳໃຊ້ທີ່ດິນທີ່ຍືນຍົງອີກດ້ວຍ.

ໃນຕອນທ້າຍກອງປະຊຸມໄດ້ໃຫ້ຄວາມສຳຄັນວ່າຄວນ ມີໂອກາດຈັດກອງປະຊຸມແບບນີ້ເລື້ອຍໆ.



ສຳພາດແຕ່ລະຄອບຄົວ (ສຳຫຼວດເພີ່ມເຕີມ)



ຜູ້ເຂົ້າຮ່ວມຍືນຂຶ້ນ ປະກອບຄຳເຫັນ

## ໂສມໜ້າຜູ້ເຂົ້າຮ່ວມໂຄງການ (ບ້ານປີ່ງດົງ: ຄວາມຈິງຍັງບໍ່ທັນໄດ້ເຂົ້າຮ່ວມ)

ມຸມນີ້ຖືວ່າເປັນມຸມແນະນຳໃຫ້ຮູ້ຈັກກັບຜູ້ທີ່ເຂົ້າຮ່ວມໂຄງການໃນເບື້ອງຕົ້ນ. ເທື່ອນີ້ເປັນເທື່ອທີ່ສາມ ທີ່ມີການລົງສຳພາດ ແລະ ໃນຄັ້ງນີ້ມີພຽງ 2 ທ່ານ ຄື: ທ່ານ ທອງວັນ, ນາຍບ້ານໆ ປີ່ງດົງ ແລະ ທ່ານ ສົມພອນ ເຊິ່ງເປັນປະທານຄະນະກຳມະການເພື່ອການຈັດຕັ້ງປະຕິບັດກິດຈະກຳຢູ່ ຈຸດເລີ້ມຕົ້ນ (ຄປຕ) ບ້ານປີ່ງດົງເປັນບ້ານໜຶ່ງ ທີ່ຂຶ້ນກັບເມືອງນານ ແຂວງຫຼວງພະບາງ ແລະ ຫ່າງຈາກຕົວເມືອງຫຼວງພະບາງໄປທາງທິດຕາເວັນຕົກສ່ຽງໃຕ້ ປະມານ 64 ກິໂລແມັດ ບ້ານເຮືອນປະຊາຊົນໄດ້ລຽງລາຍໄປຕາມສອງຟາກທາງ ແລະມີໄຟຟ້າໃຊ້ແລ້ວ. ຈຳນວນປະຊາຊົນທັງໝົດ ແມ່ນ 526 ຄົນ, ມີນ້ຳສ້າງ 102 ໜ່ວຍ. ເນື້ອທີ່ຂອງບ້ານມີປະມານ 1.336 ເຮັກຕາ, ຊຶ່ງຖືວ່າເປັນບ້ານໃຫຍ່ແຫ່ງໜຶ່ງໃນລາວ. ຊົນເຜົ່າທີ່ອາໃສຢູ່ບ້ານນີ້ ທັງໝົດເປັນລາວລຸ່ມ, ມີການເຮັດນາ, ເຮັດໄຮ່ປູກເຂົ້າ ປູກໝາກເດືອຍ, ໝາກກ້ຽງ ແລະ ເຄື່ອງປ່າຂອງດົງ ແລະອື່ນໆ.

### ນາຍບ້ານ ບ້ານປີ່ງດົງ (ທ່ານ ທອງວັນ)



**[ປະຫວັດຫຍໍ້]**

ທ່ານ ທອງວັນ ອາຍຸ 45 ປີ, ມີເມຍ (38 ປີ) ມີລູກທັງໝົດ 6 ຄົນ ລູກສາວກົກ 21 ປີ, ລູກຊາຍກົກ 18 ປີ, ລູກສາວ ຄົນທີ່ສອງ 16 ປີ, ຄົນທີ່ສາມ 14 ປີ, ຄົນທີ່ສີ່ 12 ປີ ແລະຄົນທີ່ຫ້າ 10 ປີ. ປະຈຸບັນນີ້ ມີແຕ່ພົກພູ້ນຢູ່ກັບໂຄງການ ຟໍຄອມ(FORCOM) ໃນນາມທີ່ເປັນຜູ້ນຳຂອງບ້ານ ທ່ານໄດ້ອອກເຫື່ອເທແຮງຢ່າງຕັ້ງໜ້າ.

ທ່ານໄດ້ໃຫ້ທັດສະນະວ່າ: ຍ້ອນມີລູກຫຼາຍ ຈຳເປັນຕ້ອງໄດ້ ສູ້ຊົນເຮັດຫຼາຍສິ່ງຫຼາຍຢ່າງ. ຜູ້ກ່ຽວດີໃຈຫຼາຍທີ່ມີ ໂຄງການ ຟໍຄອມ ເຂົ້າມາສະໜັບສະໜູນສິ່ງເສີມ. ຍ້ອນວ່າມີໂຄງການຊ່ວຍ, ຊີວິດການເປັນຢູ່ຂອງຊາວບ້ານ ຈຶ່ງຄ່ອຍປ່ຽນແປງໄປໃນທາງທີ່ດີຂຶ້ນ. ຍົກຕົວຢ່າງ ຄື: ຕັ້ງແຕ່ກ່ອນນັ້ນ ພາຍໃນບ້ານມີແຕ່ການຜະລິດຕາມແບບດັ່ງເດີມ, ສັດລ້ຽງຈຶ່ງຕາຍໄປນຳຢ່າງຫຼວງຫຼາຍ ເຮັດໃຫ້ລາຍຮັບຂອງຊາວບ້ານຕ່ຳ. ປະຈຸບັນ, ໂຄງການຟໍຄອມໄດ້ແນະນຳວິທີການລ້ຽງສັດ ແບບກຸ່ມຄອບຄົວ ຢ່າງມີເຕັກນິກວິຊາການ. ຂ້າພະເຈົ້າເຊື່ອວ່າລາຍຮັບທີ່ໄດ້ມາຈາກການລ້ຽງສັດຂອງຊາວບ້ານຈະເພີ່ມຂຶ້ນຢ່າງແນ່ນອນ.

ຖ້າພວກເຮົາເຮັດໄດ້ຕາມແຜນຂອງໂຄງການ (ເຊັ່ນ: 1.) ປະຕິບັດລະບົບການໝູນວຽນທຶນພາຍໃນບ້ານສຳລັບການລ້ຽງສັດ, ການປູກໄມ້, ການສັບຊ່ວາວນາ, ການລ້ຽງປາ ແລະ ອື່ນໆນັ້ນ ກໍ່ຈະຕອບສະໜອງໃຫ້ແກ່ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ນັບມື້ດີຂຶ້ນ, 2.) ການສິດສອນເຕັກນິກວິຊາການໃໝ່ ໃຫ້ປະຊາຊົນ, 3.) ການເພີ້ມລາຍໄດ້ຂອງປະຊາຊົນ ໂດຍຜ່ານກິດຈະກຳການຜະລິດຕ່າງໆ ເປັນຕົ້ນ.

ສ່ວນດ້ານໜຶ່ງນັ້ນ, ທ່ານໄດ້ຂໍຮ້ອງມາຍັງໂຄງການຄື: 1.) ໃນເວລາທີ່ເຂົ້າຮ່ວມໂຄງການ ດຳເນີນການຜະລິດຕາມແຜນການ, ເມື່ອມີຄວາມຈຳເປັນຢາກໄດ້ສັດລ້ຽງ ຫຼື ວັດຖຸອຸປະກອນ ກໍຢາກໃຫ້ມີບ່ອນຊື້ໄດ້, 2.) ຢາກໄດ້ຄວາມກະຈ່າງແຈ້ງຕື່ມກ່ຽວກັບລະບົບການໝູນວຽນທຶນທີ່ ໂຄງການສະໜັບສະໜູນ ເພາະວ່າປະຊາຊົນສ່ວນໃຫຍ່ ຍັງບໍ່ທັນເຂົ້າໃຈດີໝາຍຄວາມວ່າ ຢາກມີເວລາໃຫ້ປະຊາຊົນສຶກສາແລະທຳຄວາມເຂົ້າໃຈຕື່ມ. ຍ້ອນມີໂອກາດທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ, ດັ່ງນັ້ນ ປະຊາຊົນກໍມີຄວາມຕັ້ງໃຈ ແລະສຸມເຫື່ອແຮງເຂົ້າໃສ່ການພັດທະນາບ້ານຂອງຕົນ.

### ປະທານ ຄປຕ ບ້ານປີ່ງດົງ (ທ່ານ ສົມພອນ)

**(ປະຫວັດຍໍ້)**



ທ່ານ ສົມພອນ ອາຍຸ 38 ປີ, ເມຍ (38 ປີ), ມີລູກທັງໝົດ 2 ຄົນ. ລູກສາວກົກ 18 ປີ, ລູກຫຼ້າ 9 ປີ. ອາດເປັນເພາະຮ່າງກາຍທີ່ສູງຮຽວ ກໍບໍ່ຈັກ ຜູ້ກ່ຽວຈຶ່ງເຄື່ອນໄຫວຫ້າວຫັນຄອງແຄ້ວ ໃນການປະກອບສ່ວນວຽກງານໂຄງການ ໄດ້ເປັນຢ່າງດີ.

ທ່ານ ສົມພອນ ໄດ້ຮັບໜ້າທີ່ໃຫ້ເປັນ ປະທານຄະນະກຳມະການເພື່ອການຈັດຕັ້ງປະຕິບັດກິດຈະກຳຂອງຈຸດເລີ້ມຕົ້ນ (ຄປຕ) ຂອງບ້ານປີ່ງດົງ. ທ່ານໄດ້ເຮັດວຽກໃນຖານະເປັນຜູ້ໃຫ້ຄຳປຶກສາແກ່ຊາວບ້ານທີ່ເຂົ້າຮ່ວມໂຄງການ. ທ່ານໄດ້ແນະນຳແລະຊຸກຍູ້ ໃຫ້ຊາວບ້ານປະຕິບັດກິດຈະກຳ ທີ່ໄດ້ຮັບການສົ່ງເສີມ ພາຍໃຕ້ລະບຽບຫຼັກການຂອງ ໂຄງການ. ທັງນີ້ກໍເພື່ອເຮັດໃຫ້ຊາວບ້ານແລະໂຄງການ ໄດ້ຮັບຜົນສຳເລັດຮ່ວມກັນ. ໃນອານາຄົດ ຖ້າວ່າ ໂຄງການຟໍຄອມ ຫາກດຳເນີນໄປໄດ້ດີ, ມັນກໍຈະເປັນການແກ້ໄຂ ແລະ ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນໃນບ້ານໃຫ້ໝົດໄປໄດ້. ຂ້າພະເຈົ້າ ກໍຄືນາຍບ້ານ ບ້ານປີ່ງດົງ ແມ່ນເຫັນຄວາມສຳຄັນຂອງ ການສະໜັບສະໜູນ ຈາກໂຄງການ ຟໍຄອມ ສະເໝີ. ແຕ່ວ່າ ໃນການທີ່ຈະໃຫ້ປະຊາຊົນ ເຊົາເຮັດໄຮ່ ແລະ ຫັນມາເຮັດນາປູກເຂົ້ານັ້ນ, ຈຳເປັນຕ້ອງໄດ້ເຊົ່າຄວາຍມາເຮັດ. ແຕ່ລະປີຈະຕ້ອງເສຍຄ່າເຊົ່າຄວາຍ ປະມານ 8 ແສນກີບ (8 ພັນເຢັນ). ດັ່ງນັ້ນ ຖ້າມີວິທີທາງສະໜັບສະໜູນໂຕຄວາຍ ໃຫ້ແກ່ຊາວບ້ານ ແນ່ນອນວ່າຈະເປັນການຫລຸດຜ່ອນການສິ້ນເປືອງໄປອີກຫຼາຍ.

(ຂໍ້ມູນ : ຄອບຄົວຊາວນາ ບ້ານ ປີ່ງດົງ ມີລາຍຮັບປະຈຳປີ ປະມານ 6-7 ລ້ານກີບ (6-7 ສິບພັນເຢັນ). ການທີ່ຈະຈ່າຍເງິນ 8 ພັນເຢັນ ໄປນັ້ນ, ແນ່ນອນ ຕ້ອງຖືວ່າແພງ ແມ່ນບໍ?).

## (ຕໍ່ຈາກ P2) ຄວາມຫຍຸ້ງຍາກໃນການຈັດສົ່ງ....

ແຕ່ວ່າການຊື້ສັດເຂົ້າມາລ້ຽງໃນຕົວຈິງນັ້ນ [ມັນເປັນໄປໄດ້ຍາກ ທີ່ຈະໃຫ້ຜູ້ຕ້ອງການສັດແຕ່ລະຄົນ ເປັນຜູ້ຈ່າຍລວງໜ້າໄປກ່ອນແລ້ວ ແຕ່ຕົນເອງພັດບໍ່ໄດ້ເລືອກຊື້ເອງ, ແຕ່ໃນກໍລະນີນີ້, ທາງໂຄງການເປັນຜູ້ຊື້ໃຫ້ກໍໄດ້]. ທາງໂຄງການໄດ້ອະທິບາຍແລ້ວອະທິບາຍອີກວ່າ: ການທີ່ຈະໃຫ້ໂຄງການ ມອບເງິນສົດໃຫ້ຊາວບ້ານ ໄປຊອກຊື້ສັດ ຫຼື ວັດຖຸອຸປະກອນເອົາເອງນັ້ນ ແມ່ນບໍ່ສາມາດເຮັດໄດ້. ຊາວບ້ານ ຈະຕ້ອງໄດ້ຮັບສິນເຊື່ອເສຍກ່ອນ ແລ້ວຈຶ່ງສາມາດຊື້ສັດ ຫຼືສິ່ງຂອງຕາມທີ່ຕົນເອງພໍໃຈ. ຖ້າຫາກວ່າມີການຊື້ຂາຍກັບຄົນຂາຍສິນຄ້າ (ພໍ່ຄ້າຄົນກາງພາຍໃນບ້ານ ຫຼື ຄົນບ້ານໃກ້ຄຽງ) ກໍ່ຈະຕ້ອງມີການຕໍ່ລອງລາຄາກັນຢູ່ກັບທີ່ ແລະຈ່າຍພ້ອມເລີຍ. ໃນການຈ່າຍສົດກັບທີ່ນັ້ນ ຈະເປັນການຈ່າຍໃຫ້ກັບພໍ່ຄ້າ, ໂດຍສະເພາະ ໃນກໍລະນີທີ່ຊື້ສັດລ້ຽງນັ້ນ ແມ່ນບໍ່ສາມາດສັ່ງຈ້ອງແລ້ວຈ່າຍຕາມພາຍຫຼັງໄດ້.

ເຖິງຢ່າງໃດກໍດີ, ໃນການຈັດຊື້ແບ້ ກໍຍັງຫຼີກລ່ຽງບໍ່ໄດ້ທີ່ຈະຕ້ອງໃຫ້ພໍ່ຄ້າ ເປັນຄົນຈັດຊື້ມາໃຫ້ ຊຶ່ງຈະຕ້ອງເສຍເວລາປະມານ 2 ຫາ 3 ອາທິດ ກ່ວາສິນຄ້າຈະມາຮອດມືຜູ້ຕ້ອງການລ້ຽງ. ແນ່ນອນ, ລາຄາແບ້ທີ່ພໍ່ຄ້າຊື້ມາໃຫ້ນັ້ນ ຈະຕ້ອງແພງກ່ວາ ລາຄາແບ້ທີ່ຊື້ພາຍໃນບ້ານສະເໝີ(ແບ້ທີ່ຊື້ຢູ່ພາຍໃນບ້ານ 1 ກິໂລ ລາຄາປະມານ 14.000ກີບ, ແຕ່ຊື້ຈາກບ້ານອື່ນແມ່ນ 16.000ກີບ/ກິໂລ).ເມື່ອແບ້ຫຼືສັດລ້ຽງ ຖືກຈັດສົ່ງມາຮອດແລະເປັນທີ່ຖືກໃຈຂອງຊາວບ້ານຜູ້ຕ້ອງການລ້ຽງແລ້ວ ການຊຸມນຸມຈ່າຍເງິນກັນນັ້ນ ກໍລິ່ງເອີຍດ້ວຍຮອຍຍິ້ມ. ໃນເທື່ອນີ້ຖືວ່າ ໄດ້ດຳເນີນໄປຕາມຮູບແບບ ການຈ່າຍເງິນຂອງຝ່າຍ ໄຈກາ (JICA) ວາງໄວ້, ຄືວ່າຫາຄົນນັ້ນ ຕ້ອງໄດ້ຂໍຮ້ອງພໍ່ຄ້າມີກາງຈັດຊື້ມາໃຫ້ ຊຶ່ງມີການຈ່າຍໃຫ້ພໍ່ຄ້າ ໃນລາຄາທີ່ປະເມີນສູງໄວ້, ແຕ່ກໍເປັນລາຄາທີ່ສູງກ່ວາທີ່ຊາວບ້ານ ກໍຄື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໄດ້ຄາດກະໄວ້.

ອີກອັນໜຶ່ງ, ໃນເວລາວາງແຜນນັ້ນ ພວກເຮົາໄດ້ສະເໜີງົບປະມານເພື່ອຮັບໃຊ້ແຜນການຈັດຊື້ ຄື ແບ້ແມ່ໂຕໜຶ່ງຂະໜາດນ້ຳໜັກສະເລ່ຍ ແມ່ນ 35 ກິໂລ. ແຕ່ໃນຄວາມເປັນຈິງຊາວບ້ານກໍຍັງເປັນຫ່ວງວ່າ ຍ້ານຊື້ຖືກໂຕສັດທີ່ເປັນພັນ, ເມື່ອນຳມາລ້ຽງຈະບໍ່ສາມາດຜະລິດລູກໄດ້. ດັ່ງນັ້ນ ປະຈຸບັນຈຶ່ງມີຄົນປະສົງທີ່ຢາກຈະຊື້ເອົາສັດທີ່ມີລູກຕິດ ຫຼື ແມ່ມານລູກເລີຍ. ດັ່ງນັ້ນ ເມື່ອລວມນ້ຳໜັກແລ້ວ ກໍຕົກເປັນປະມານ 75 ກິໂລ (ສູງກ່ວານ້ຳໜັກທີ່ໄດ້ສະເໜີໄວ້ ຫຼື ເທົ່າກັບນ້ຳໜັກຂອງສອງໂຕ). ໃນທາງປະຕິບັດ, ກ່ອນການຈັດຊື້ສັດ ຊາວບ້ານໄດ້ມີຄຳຮ້ອງສະເໜີຕໍ່ໂຄງການໄວ້ແລ້ວ. ເຂົາເຈົ້າກໍຈື່ໄດ້ດີວ່າ ນ້ຳໜັກຂອງໂຕສັດທີ່ຈະໄດ້ຮັບນັ້ນ ໄດ້ຖືກກຳນົດໄວ້ກ່ອນແລ້ວ. ດັ່ງນັ້ນ ເຂົາເຈົ້າກໍເຫັນດີດີກັນ ຖ້ານ້ຳໜັກລວມຂອງຈຳນວນໂຕສັດທີ່ໄດ້ຮັບຕົວຈິງ ກໍຈະຫຼຸດລົງ.

ແຕ່ວ່າ, ສຳລັບຊາວກະສິກອນຜູ້ຢາກໄດ້ສັດລ້ຽງທີ່ມີສະພາບເປັນແມ່ມານນັ້ນ ເມື່ອຊື້ໄປລ້ຽງບໍ່ດົນກໍຈະໄດ້ລູກ, ທາງໂຄງການກໍຈະຖືວ່າເປັນຜົນຜະລິດທີ່ເພີ່ມຂຶ້ນແລະເຕີບໃຫຍ່ໄວ ດັ່ງນັ້ນ ຈະເປັນການເລັ່ງໃຫ້ໄດ້ສົ່ງທຶນເບື້ອງຕົ້ນນີ້ ແກ່ຊາວບ້ານຜູ້ອື່ນ(ທີ່ຢາກລ້ຽງ) ໄດ້ໄວຂຶ້ນ. ດັ່ງນັ້ນ ໃນເວລາຂຽນໃບຄຳຮ້ອງ ເພື່ອຂໍການສະໜັບສະໜູນນັ້ນ ຈະຕ້ອງໄດ້ກຳນົດໄວ້ລະອຽດແລະເພື່ອເປັນການຫຼີກລ້ຽງບັນຫາຕ່າງໆທີ່ຈະຕາມມາ.ທາງໂຄງການກໍພະຍາຍາມຫາວິທີທາງໃຫ້ຊາວບ້ານເປັນຜູ້ໄດ້ເລືອກຊື້ ໂດຍການເຫັນໂຕສັດ ດ້ວຍຕາໂຕເອງ ຈະດີກ່ວາ.

## ເລື່ອງ “ເຄື່ອງປ່າຂອງດົງ” ທີ່ມາເລົ່າສູ່ກັນຟັງຂອງທ່ານ ໂມລິອາກິ ວາຕະນາເບະ

ຄໍາວ່າ NTFP ແມ່ນຫຍໍ້ມາຈາກ Non Timber Forest Products ເວົ້າງ່າຍໆ ກໍຄື ຜົນຜະລິດຈາກປ່າດົງທີ່ນອກເໜືອໄປຈາກໄມ້ທ່ອນ, ຫຼື ຈະເວົ້າວ່າ: “ເຄື່ອງປ່າຂອງດົງ” ກໍໄດ້ ໃນທີ່ນີ້ ຈະຂໍເວົ້າເລື່ອງຍານ.

### ຍານ (ພາສາອັງກິດ : Benzoin or Styrax ; ພາສາລາວ : Yan)



ຖືວ່າເປັນເທື່ອທີ່ 6 ແລ້ວ ທີ່ໄດ້ນໍາເອົາເລື່ອງ "ຍານ" ອອກມາໃຫ້ທ່ານໄດ້ອ່ານ. ຍານ ເປັນຢາງໄມ້ທີ່ ປູດອອກມາຕາມ ງ່າຕົ້ນຍານ ບ່ອນທີ່ເປືອກຕົ້ນຍານມີແປ້ວ. ສ່ວນຫຼາຍຈະຢູ່ລະດັບສູງຈາກພື້ນດິນປະມານ 15 ຫາ 20m. ໃນສັດຕະວັດທີ່ 16 ຫາ 17, ສິນຄ້າສົ່ງອອກຕົ້ນຕໍຂອງອານາຈັກລ້ານຊ້າງໄດ້ແກ່ : ຄໍາ, ຄັ່ງ ແລະ ຍານນັ້ນເອງ. ໂດຍທົ່ວໄປ, ເມື່ອຕົ້ນຍານມີອາຍຸໄດ້ 6 ປີ, ລໍາຕົ້ນຈະມີໜ້າຕັດປະມານ 15 ຫາ 17 ຊັງຕີ ແລະເປັນໄລຍະທີ່ໃຫ້ຜົນຍານໄດ້ຫຼາຍ. ຢູ່ລາວ ເພິ່ນມັກເອົາມີດໄປຂີດຫຼືເຈາະຮູ ບ່ອນງ່າທີ່ເປັນຮູບໂຕ V ເພື່ອໃຫ້ຢາງຍານປູດອອກມາ. ຢາງທີ່ປູດໄຫຼອອກມາ ຈະຄ່ອຍໆກ້າມແລະແຂງຂຶ້ນ ມີສີເຫຼືອງປົນຂາວ. ໃນຮູບ ແມ່ນຍານທີ່ຂ້າພະເຈົ້າໄດ້ມາຈາກຄູ່ຮ່ວມງານຄົນລາວ, ດົມແລ້ວຮູ້ສຶກວ່າ ມີກິ່ນຫອມຄື ວະນິລາ ຫັ້ນລະ. ຢູ່ ຍີ່ປຸ່ນ ເພິ່ນນໍາໃຊ້ຍານເພື່ອເຮັດເຄື່ອງຫອມໃສ່ຕູ້ບູຊາ, ຢູ່ມຸມຂາຍເຄື່ອງເທດສໍາລັບປິ່ນປົວ(Aromatherapy) ຂອງຮ້ານຂາຍເຄື່ອງທີ່ ຍີ່ປຸ່ນ ນັ້ນ ກໍຈະມີນໍ້າມັນຍານ ວາງຂາຍໄວ້ຄືກັນ. ປະເທດທີ່ໃຊ້ຍານເພື່ອບູຊາໃນພິທີກໍາທາງສາດສະໜາ ຫຼາຍກວ່າໝູ່ເຫັນຈະໄດ້ແກ່ ອິນໂດເນເຊຍ ແລະ ບັນດາປະເທດອິດສະລາມໃນເຂດຕາເວັນອອກກາງ ເປັນຕົ້ນ. ນອກຈາກນີ້ເພິ່ນຍັງນໍາຍານໄປໃຊ້ເຂົ້າໃນການເຮັດເຄື່ອງສໍາອາງ, ສານກັນບູດ/ເນົ່າ ແລະ ອື່ນໆ.

## ເລື່ອງຕ່າງໆຂອງລາວ

*~ ມູມນີ້ ຈະພັນລະນາເຖິງການໄດ້ພົບໃບໜ້າອັນຍິ້ມແຍ້ມ ຂອງຄົນລາວ ແລະເທື່ອນີ້ເປັນເລື່ອງເລົ່າຂອງຜູ້ຊ່ຽວຊານໂຄງການ: ນ. ອິດຊິບາຊິ ນໍຣິໂກະ*

### ●ຕະຫຼາດກາງຄືນທີ່ ຫຼວງພະບາງ●

ຢາກຂໍສະເໜີໃຫ້ທ່ານຮູ້ ກ່ຽວກັບ ຕະຫຼາດກາງຄືນ ຊຶ່ງເປັນການຊື້ຂາຍ ທີ່ດໍາເນີນເທິງທົ່ນທາງກາງເມືອງຫຼວງພະບາງ ໂດຍມີຮ້ານວາງຂາຍ ຍາວໄປຕາມເສັ້ນທາງ ແລະ ມີຜູ້ຄົນເລາະຊົມຢ່າງຄັບຄາໜາແໜ້ນ ໃນແຕ່ລະຄືນ.

ເມື່ອປະມານ 3 ຫາ 4 ປີມານີ້, ທຸກໆແລງ ຕັ້ງແຕ່ 5 ໂມງເຄິ່ງ ເຖິງ 9 ໂມງ, ນັກທ່ອງທ່ຽວຈະມາທີ່ນີ້ ເພື່ອຍ່າງຊື້ຜະລິດຕະພັນພື້ນເມືອງ ຕາມທົ່ນທາງ ຊຶ່ງມີຄວາມຍາວປະມານ 200 ກ່ວາແມັດ. ຂອງສ່ວນໃຫຍ່ ແມ່ນແຜ່ນຜ້າຕໍ່າ ແລະເຄື່ອງຫັດຖະກໍາຂອງບັນດາເຜົ່າ, ເຈ້ຍສາ, ຊາ ຕະຫຼອດເຖິງຜະລິດຕະພັນບາງຢ່າງ ຈາກຫວຽດນາມ ກໍມີໃຫ້ເຫັນເປັນປະຈໍາ. ພວກຊາວເມືອງຈະວາງສິນຄ້າຕາມສອງຟາກທາງແລະເທິງພື້ນທາງກາງໂດຍຈະນັ່ງປິ່ນຫຼັງອີງກັນຂາຍ, ກາຍເປັນ 4 ແຖວ ກໍວ່າໄດ້. ສໍາລັບຮ້ານທີ່ຂ້າພະເຈົ້າມັກແວ່ເປັນປະຈໍາ ໄດ້ແກ່ຮ້ານທີ່ມີເຈົ້າຂອງເປັນຄົນເຜົ່າມົ້ງ. ຕາມທີ່ຮູ້ ເຈົ້າຂອງຮ້ານໄດ້ຍາຍຈາກຊານເມືອງຫຼວງພະບາງ ເຂົ້າມາຕັ້ງຮາກຖານໃນເມືອງ ແລະ ເຮັດກິດຈະກໍາຖັກແສ່ວ ສະເພາະເລີຍ.

ຜົວຂອງລາວເປັນຄົນຂັບລົດຕຸກໆ, ເວົ້າພາສາລາວໄດ້ດີ ດັ່ງນັ້ນ ກໍເລີຍມີເລື່ອງເຮຮາເລົ່າໃຫ້ຟັງ ເປັນປະຈໍາ ມີເລື່ອງໜຶ່ງທີ່ລາວເລົ່າໃຫ້ຟັງ ຄືວ່າ : ການທີ່ມາຕັ້ງຮ້ານຂາຍເຄື່ອງຢູ່ບ່ອນນີ້ ແຕ່ລະຄືນ ຈະຕ້ອງເສຍຄ່າ ສະຖານທີ່ 3.000 ກີບ, ດອກໄຟ 1 ດອກ ຈະຈ່າຍ 1.000 ກີບ. ແຕ່ມີບາງເທື່ອ ນັ່ງ 2, 3 ມື້ ກໍ່ບໍ່ໄດ້ຂາຍເຄື່ອງກໍ່ມີ. ດັ່ງນັ້ນ ບາງມື້ຂາຍເຄື່ອງໂດຍ ບໍ່ໄຕ້ໄຟເລີຍກໍມີ ເພາະວ່າບໍ່ມີເງິນຮອດພັນກີບ ພໍຈະເສຍຄ່າດອກໄຟ.

ແຕ່ວ່າ, ມີບາງເທື່ອ ແຜ່ນແພທີ່ກໍາລັງແສ່ວເຮັດສິນຄ້າຢູ່ດີໆ ກໍມີບາງຄົນ, ໂດຍສະເພາະແມ່ນ ຄົນຕ່າງປະເທດມາບອກໃຫ້ເຮັດແນວນັ້ນແນວນີ້ ຕ້ອງການສີນັ້ນສີນີ້ ແລະ ກໍຂາຍໄດ້ ພ້ອມດຽວນັ້ນກໍມີ. ອັນນັ້ນແມ່ນຍາມມັນໜານ



(ໂຊກດີ). ເມື່ອຖາມວ່າສິນຄ້າບາງອັນ ກໍຄືກັບຮ້ານອື່ນເຮັດຈັ່ງໃດຈະຂາຍໄດ້? ໄດ້ຮັບຄໍາຕອບວ່າ : ກະພໍໄດ້ ສ່ວນຫຼາຍສິນຄ້າອັນທີ່ເຮັດມາກ່ອນແລ້ວ ຂາຍໄດ້ດີ, ກໍຈະເຮັດແນວນັ້ນຂາຍອີກ.

ແຕ່ເບິ່ງໄປແລ້ວຮູ້ສຶກວ່າເຂົາເຈົ້າບໍ່ໄດ້ໃສ່ໃຈ ຫຼາຍປານໃດ ກ່ຽວກັບ ສີ ແລະປະເພດສິນຄ້າ ວ່າປະເພດໃດໄດ້ຂາຍດີກ່ວາກັນ. ຮູ້ສຶກວ່າເປັນເລື່ອງແປກ ຫຼືວ່າເຂົາເຈົ້າບໍ່ຮູ້ເລື່ອງວິທີຄ້າຂາຍ ແຕ່ວ່າກໍນໍາເຄື່ອງມາຂາຍເປັນປະຈໍາ.

ຖ້າຈະສະເລ່ຍແລ້ວ ແຕ່ລະຄືນ ພວກເຂົາເຈົ້າຄົງຈະຂາຍໄດ້ປະມານ 2 ຫາ 3 ໝື່ນກີບ ປານນັ້ນລະ(ຫຼືວ່າເວລາຖືກຖາມ ເຂົາເຈົ້າບອກຕໍ່າໆໄວ້ກໍບໍ່ຈັກ). ສໍາລັບຜູ້ທີ່ມີສິນຄ້າລາຄາແພງຂາຍນັ້ນ, ເຄື່ອງທີ່ລາຄາຕໍ່າສຸດຈະຢູ່ປະມານ 7 ໂດລາ, ຖ້າຈະສະເລ່ຍໃສ່ຄົນອື່ນ ກໍປະມານ 50 ພັນກີບ ນີ້ລະ.

ຖ້າຈະວ່າຮ້ານ ກໍບໍ່ແມ່ນ ອາດຈະວ່າແຜງລອຍຈະຖືກກ່ວາ, ເພາະວ່າເຂົາເຈົ້າຈະເອົາຜ້າໃຫຍ່ແຜ່ນໜຶ່ງປູລົງພື້ນກ່ອນ ແລ້ວເອົາສິນຄ້າຍອງຂາຍຢູ່ເທິງເທົ່ານັ້ນເອງ. ໄຟຟ້າທີ່ໄຕ້ຢູ່ແຕ່ລະຮ້ານ ກໍແມ່ນຕໍ່ມາຈາກໄຟແຄມທາງ ແລະຕໍ່ຍາວໃຫ້ແຕ່ລະຮ້ານໃຊ້, ແຕ່ລະຮ້ານຈະຖືກກໍານົດໃຫ້ໃຊ້ດອກໄຟ ໂດຍສະເລ່ຍຮ້ານລະ 1 ດອກ.

ແຕ່ວ່າ ການທີ່ໃຊ້ດອກໄຟປ້ອມ ລຽນກັນໄປນັ້ນ ແສງຈະແຈ້ງແທ້ກໍບໍ່ແມ່ນ, ພໍແຕ່ສະຫຼົວສະຫຼົວ ໄປເທົ່ານັ້ນ. ເບິ່ງໄປແລ້ວກໍມີສະເໜ່ແປກໆໄປອີກແບບໜຶ່ງຄືກັນ. ຖ້າທ່ານມີເວລາ ກໍຫາໂອກາດໄປທ່ຽວຊົມລອງເບິ່ງ ຄົງຈະດີ.

## <ກິດຈະກໍາຕົ້ນຕໍ>

**ແຂກທີ່ສໍາຄັນທີ່ມາຢ້ຽມຢາມ (ແຕ່ວັນທີ່ 01 ຫາ ວັນທີ່ 31 ເດືອນ ກໍລະກົດ)**

- ວັນທີ່ 20 ເດືອນ 06: ທ່ານ ດຣ ຕີ, ລັດຖະມົນຕີຊ່ວຍວ່າການກະຊວງກະສິກໍາແລະປ່າໄມ້ ຢ້ຽມຢາມໂຄງການ

**ການເຄື່ອນໄຫວທີ່ສໍາຄັນ (ແຕ່ວັນທີ 01 ຫາ 31/07)**

- ວັນທີ່ 01 ເດືອນ 07: ກອງປະຊຸມປະຊາຊົນໝົດບ້ານ ຄັ້ງທີ່ 1 ຢູ່ບ້ານປ່າຄາ (ເມືອງລອງ ແຂວງຫຼວງນໍ້າທາ)
- ວັນທີ່ 06 ເດືອນ 07: ກອງປະຊຸມປະຊາຊົນໝົດບ້ານ ຄັ້ງທີ່ 1 ຢູ່ບ້ານໂພນທອນ (ເມືອງເຟືອງ ແຂວງວຽງຈັນ) ແລະ ບ້ານ ນໍ້າສາດ (ເມືອງວຽງທອງ ແຂວງທິວພັນ)
- ວັນທີ 07 ເດືອນ 07: ກອງປະຊຸມປຶກສາຫາລື ກ່ຽວກັບການນໍາໃຊ້ທີ່ດິນແລະປ່າໄມ້ ຢ່າງຍືນຍົງ ຢູ່ບ້ານສາມຕົ້ນ (ເມືອງວຽງຄໍາ ແຂວງຫຼວງພະບາງ).
- ວັນທີ 08 ເດືອນ 07: ພິທີມອບໂຄງການກໍ່ສ້າງລະບົບນໍ້າລິນໃຫ້ຊາວບ້ານນາມອນ(ເມືອງແລະແຂວງໄຊຍະບູລີ).
- ວັນທີ່ 21 ເດືອນ 07: ກອງປະຊຸມ ຄປລ (ຄະນະກໍາມະການຈັດຕັ້ງປະຕິບັດກິດຈະກໍາຂອງຈຸດທົດລອງ) ຄັ້ງທີ່ 1 ຢູ່ ບ້ານໂພນທອນ (ແຂວງວຽງຈັນ)
- ວັນທີ່ 22 ເດືອນ 07: ກອງປະຊຸມ ຄປລ ຄັ້ງທີ່ 1 ຢູ່ ບ້ານນໍ້າສາດ (ແຂວງທິວພັນ)
- ວັນທີ່ 26 ເດືອນ 07: ກອງປະຊຸມ ຄປລ ຄັ້ງທີ່ 1 ຢູ່ບ້ານປ່າຄາ (ແຂວງຫຼວງນໍ້າທາ).

## ຄໍາເຫັນຈາກບັນນາທິການ

ໃນເດືອນ 7 - ເດືອນ 8, ຢູ່ຫຼວງພະບາງຝົນຈະຕົກເກືອບທຸກມື້, ປະມານ 10 ມື້ໃດ ຈຶ່ງຈະເຫັນຕາເວັນເທື່ອໜຶ່ງ. ລະວັງອຸທົກກະໄພ ໄວ້ແດ່ກໍດີ.

ຢູ່ພື້ນທີ່ຂອງໂຄງການ FORCOM ມີບ່ອນທີ່ຖືກນໍ້າຖ້ວມ, ປາທີ່ຊື້ມາໃຫ້ຊາວບ້ານລ້ຽງ ຖືກນໍ້າພັດໜີຈາກສະ, ຊາວບ້ານນໍ້າຕາຊຶມເບົ້າ. ທົ່ນທາງໄປຫາເຂດໂຄງການເປັນບອກເປັນຕົມ ຫຍຸ້ງຍາກທາງລໍາບາກຫຼາຍ, ແຕ່ລະມື້ໄດ້ແຕ່ພາວັນນາໃຫ້ຝົນຕົກພໍດ້ານພໍດີ. ສາທຸ! ສາທຸ!.

(ຊື່ລາວ : ແສງປະເສີນ)